**ATTACHMENT 4: List of Information and Approval Letters**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງການຕ່າງປະເທດ

ເລກທີ:...090.../ຕປທ.ຈສກ.3.12

ນະຄອນຫຼວງວຽງຈັນ, ວັນທີ 17 ມັງກອນ 2014

**ຮຽນ:** ຫົວໜ້າຫ້ອງການກະຊວງສາທາລະນະສຸກ,

ທີ່ ນະຄອນຫຼວງວຽງຈັນ.

**ເລື່ອງ:** ການອະນຸມັດໃຫ້ທີມແພດຂອງມູນນິທິຟື້ນຟູສຸຂະພາບລາວ (LRF) ເຂົ້າມາເຄື່ອນໄຫວກວດສຸຂະພາບ ຢູ່ແຂວງຜົ້ງສາລີ.

ກະຊວງການຕ່າງປະເທດ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ, ໂດຍອີງຕາມໜັງສືສະເໜີຂອງກະຊວງສາທາລະນະສຸກ, ສະບັບເລກທີ 0063/ສທ, ລົງວັນທີ 9 ມັງກອນ 2014, ກະຊວງການຕ່າງປະເທດ ເຫັນດີອະນຸມັດໃຫ້ກະຊວງສາທາລະນະສຸກຮັບເອົາທີມແພດອົງການ LRF ເຂົ້າມາກວດສຸຂະພາບໃຫ້ປະຊາຊົນ ແຂວງຜົ້ງສາລີ ໃນລະຫວ່າງວັນທີ 03 – 11 ກຸມພາ 2014 ຕາມການສະເໜີ.

ດັ່ງນັ້ນ, ກະຊວງການຕ່າງປະເທດ ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດໃຫ້ສຳເລັດຕາມແຜນການ ຕາມທາງຄວນດ້ວຍ.

ເຊັນແທນ ຫົວໜ້າຫ້ອງການ

ດາວສະຖອນ ບຸບຜາ

ຮອງຫົວໜ້າຫ້ອງການ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ

ເລກທີ 0063/ສທ

ນະຄອນຫລວງວຽງຈັນ, ວັນທີ 09 JAN 2014

ຮຽນ: ທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີວ່າການກະຊວງການຕ່າງປະເທດ.

ເລື່ອງ: ຂໍອະນຸມັດຮັບ ເອົາທີມແພດຂອງມູນລະນິທິຟື້ນຟູສຸຂະພາບລາວ (LRF)ເຂົ້າມາ ໃຫ້ການບໍລິການກວດສຸຂະພາບ ໂດຍບໍ່ໄດ້ເສຍຄ່າ ໃຫ້ພໍ່ແມ່ປະຊາຊົນ ທີ່ ແຂວງ ຜົ້ງສາລີ ໃນລະຫວ່າງວັນທີ 03 ຫາ 11 ກຸມພາ 2013.

- ອີງຕາມ ສະໂໜດນຳສົ່ງ ຈາກ ກົມປິ່ນປົວ ສະບັບເລກທີ 1713/ກປປ, ລົງວັນທີ 24 ຕຸລາ 2013.
- ອີງຕາມ ຂໍ້ຕົກລົງ ຂອງ ພະແນກສາທາລະນະສຸກ ແຂວງຜົ້ງສາລີ ສະບັບເລກທີ 40/ຫສຂ, ລົງວັນທີ 15 ຕຸລາ 2013.
- ອີງຕາມ ໜັງສືຈາກ ມູນລະນິທິຟື້ນຟູສຸຂະພາບລາວ ສະບັບລົງວັນທີ 02 ກັນຍາ 2013.

ກະຊວງສາທາລະນະສຸກ ຂໍຖືເປັນກຽດຮຽນສະເໜີມາຍັງທ່ານ ເພື່ອຂໍອະນຸມັດຮັບເອົາທີມແພດຂອງ ມູນລະນິທິຟື້ນຟູສຸຂະພາບລາວ (LRF) ໂດຍສົມທົບກັບທີມແພດ ຂອງ ແຂວງຜົ້ງສາລີ ແລະ ແຂວງອຸດົມໄຊ; ເພື່ອໃຫ້ການບໍລິການກວດສຸຂະພາບ ແລະ ປິ່ນປົວແຂ້ວ, ຕາ, ແມ່, ເດັກ ແລະ ພະຍາດທົ່ວໄປໃຫ້ຜູ້ໃຫຍ່ໂດຍບໍ່ໄດ້ເສຍຄ່າ; ໃຫ້ສຸຂະສຶກສາ ກ່ຽວກັບ ການຮັກສາສຸຂະພາບຜົ້ງປາກ-ແຂ້ວ ພ້ອມທັງແຈກຢາຍແປງ ແລະ ຢາສີແຂ້ວ ໃຫ້ແກ່ພໍ່ແມ່ປະຊາຊົນ ທີ່ ເມືອງໃໝ່, ສຳພັນ ແລະ ບຸນເໜືອ, ແຂວງຜົ້ງສາລີ. ການປະຕິບັດວຽກງານຂອງພວກກ່ຽວ ເລີ່ມແຕ່ວັນທີ 03 ຫາ 11 ກຸມພາ 2014 ດັ່ງມີລາຍລະອຽດລຸ່ມນີ້:

1. Mr. Mark James LIPONIS, ສັນຊາດ ອະເມລິກາ, P/P No.440104032
2. Mrs. Siobhan Mary MC NALLY, ສັນຊາດ ອະເມລິກາ, P/P No.104482483
3. Mrs. Vananh Thi NGUYEN, ສັນຊາດ ອະເມລິກາ, P/P No.434443494

ດັ່ງນັ້ນ, ຈຶ່ງສະເໜີມາຍັງທ່ານ ເພື່ອຄົ້ນຄ້ວາພິຈາລະນາ ຕາມທາງຄວນດ້ວຍ.

ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ

ຮອງ ແທນ ລັດຖະມົນຕີວ່າການກະຊວງສາທາລະນະສຸກ

ຮສ.ດຣ. ບຸນກອງ ສີຫາວົງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ.

ພະແນກສາທາລະນະສຸກແຂວງ

ໂຮງໝໍແຂວງອຸດົມໄຊ

ເລກທີ ...114...../ຮໝຂ

ອຸດົມໄຊ,ວັນທີ.30-1-14.

# ຂໍ້ຕົກລົງ

ຂອງຄະນະຄະອຳນວຍການໂຮງໝໍແຂວງອຸດົມໄຊ.

ວ່າດ້ວຍການອານຸມັດໃຫ້ພະນັກງານໂຮງໝໍເຄື່ອນໄຫວວຽກງານຢູ່ 03 ເມືອງຂອງແຂວງຜົ້ງສາລີ.

- ອີງຕາມ: ການສະເໜີຂອງໜ່ວຍງານຕາຄັ້ງວັນທີ 28/01/2014
- ອີງຕາມ: ຄວາມເຫັນດີຂອງຄະນະອຳນວຍການຄັ້ງວັນທີ 29/01/2014

## ຄະນະອຳນວຍການຕົກລົງ

ມາດຕາ I ອານຸມັດໃຫ້ພະນັກງານໂຮງໝໍແຂວງຈຳນວນ 08 ທ່ານລົງເຄື່ອນໄຫວກ່ຽວກັບການຮັກສາສຸຂະພາບ ຢູ່ 03 ເມືອງຂອງແຂວງຜົ້ງສາລີ. ເລີ່ມແຕ່ ວັນທີ 03 – 11/02/2014 ເຊິ່ງມີຊື່ລຸ່ມນີ້:

1. ດຣ. ເພັດສະໝອນ ອິນດາລາ ຫົວໜ້າໜ່ວຍງານຕາໂຮງໝໍແຂວງ
2. ທ ຄຳຕັນ ພັນທຸອາມາດ ພະຍາບານໜ່ວຍງານຕາໂຮງໝໍແຂວງ
3. ພຊ. ນ ຫຼ້າຊ້ອຍ ພອນສະຫວັນ ຫົວໜ້າໜວຍງານແຂ້ວ
4. ດຣ. ນ ສຸລິນາລາ ວົງປະຈິດ ວິຊາການແຂ້ວ
5. ດຣ. ວັນເພັງ ຈັນທະມິດ ຊ່ຽວຊານປະສູດ-ພະຍາດຍິງ
6. ດຣ. ສຸກມະນີ ຈັນທະວິສຸກ ຊ່ຽວຊານເດັກນ້ອຍ
7. ນ. ສີພາ ຄຸນມາລາ ພະຍາບານຕາ
8. ນ. ສົມໝາຍ ບຸນສະຫວັດ ພະຍາບານພາຍນອກ

( ສ່ວນການສິ້ນເປືອງຕ່າງໆແມ່ນໂຄງການຮັບຜິດຊອບ )

ມາດຕາ II ມອບໃຫ້ຫ້ອງການ,ຈັດຕັ້ງ,ພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ພ້ອມກັນປະຕິບັດຕາມຂໍ້ຕົກລົງສະບັບນີ້.

ມາດຕາ III ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຮ.ຜູ້ອຳນວຍການໂຮງໝໍແຂວງອຸດົມໄຊ

ດຣ. ຄຳວົງ ຮົງດາລາ

Dr. Khamving HONGDALA

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

------====0000====------

ແຂວງຜົ້ງສາລີ

ພະແນກສາທາລະນະສຸກແຂວງ

ເລກທີ 40 / ພສຂ

ວັນທີ 15 / 10 / 2013

## ຂໍ້ຕົກລົງ

## ຂອງຫົວໜ້າພະແນກສາທາລະນະສຸກແຂວງ

## ວ່າດ້ວຍການຮັບຮອງເອົາມູນນິທິຟື້ນຟູສຸຂະພາບລາວ

- ອີງຕາມ ໜັງສືແຈ້ງການຂອງທ່ານຫົວໜ້າກົມປິ່ນປົວກະຊວງສາທາລະນະສຸກ ເລກທີ 1484/ກປປ ລົງວັນທີ 15/9/2013.
- ອີງຕາມ ການປຶກສາຄົ້ນຄວ້າເຫັນດີເປັນເອກະພາບຂອງຄະນະພະແນກສາທາລະນະສຸກແຂວງແລະພາກສ່ວນທີ່ກ່ຽວຂ້ອງ ໃນວັນທີ 24/09/2013

ຫົວໜ້າພະແນກສາທາລະນະສຸກແຂວງຕົກລົງ

ມາດຕາ1: ເຫັນດີຮັບເອົາມູນນິທິຟື້ນຟູສຸຂະພາບລາວ ຊຶ່ງແມ່ນມູນນິທິໜຶ່ງທີ່ເປັນຂອງປະຊາຊົນ ອາເມລິກາ ຈະມາເຄື່ອນໄຫວໃຫ້ບໍລິການທາງດ້ານສຸຂະພາບຢູ່ເມືອງໃໝ່, ເມືອງສຳພັນ ແລະ ເມືອງບຸນເໜືອ ແຕ່ວັນທີ 3 ເຖິງ ວັນທີ 11 ກຸມພາ 2014 ໂດຍການສົມທົບກັບທີມງານແພດຈາກແຂວງຜົ້ງສາລີ ແລະ ແຂວງອຸດົມໄຊ ເພື່ອກວດ ແລະ ປິ່ນປົວແຂ້ວ, ກວດ ແລະ ປິ່ນປົວໃຫ້ແມ່ ແລະ ເດັກ, ກວດ ແລະ ປິ່ນປົວພະຍາດທົ່ວໄປໃຫ້ຜູ້ໃຫຍ່, ໃຫ້ການສຸຂະສຶກສາປາກ ແລະ ແຂ້ວພ້ອມທັງຢາຍແປງ ແລະ ຢາສີແຂ້ວ.

ມາດຕາ2: ມອບໃຫ້ແຕ່ລະພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຊາບ, ແບ່ງງານກັນໄປຢ່າງລະອຽດ ແລະ ຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນເປັນຢ່າງດີ.

ມາດຕາ3: ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຫົວໜ້າພະແນກສາທາລະນະສຸກແຂວງ

ດຣ ສົມພິດ ບຸນເຖິງ

- ບ່ອນນຳສົ່ງ
  - ຫ້ອງການພະແນກສາທາລະນະສຸກ 1 ສະບັບ.
  - ກົມປິ່ນປົວກະຊວງສາທາລະນະສຸກ 1 ສະບັບ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງສາທາລະນະສຸກ

ກົມປິ່ນປົວ

ເລກທີ 0073/ກປປ.

ນະຄອນຫຼວງວຽງຈັນ, ວັນທີ 15 JAN 2014

***ເຖິງ:*** ທ່ານຫົວໜ້າພະແນກສາທາລະນະສຸກແຂວງຜົ້ງສາລີ.

***ເລື່ອງ:*** ແຈ້ງການເຖິງ 3 ເມືອງເປົ້າໝາຍ ແລະ ຈັດຕັ້ງທີມງານຈາກໂຮງໝໍແຂວງຜົ້ງສາລີ ລົງເຄື່ອນໄຫວ ຮ່ວມກັບ ມູນນິທິຟື້ນຟູສຸຂະພາບລາວ ບໍລິການ ກວດ ແລະ ປິ່ນປົວພະຍາດ ຫູ-ດັງ-ຄໍ, ແຂ້ວ, ຕາ, ແມ່ມານ ແລະ ເດັກນ້ອຍ ຢູ່ 3 ເມືອງຂອງແຂວງຜົ້ງສາລີ.

- **ອີງຕາມ:** ການເຫັນດີຂອງລັດຖະມົນຕີຊ່ວຍວ່າການ ກະຊວງສາທາລະນະສຸກສະບັບເລກທີ 0063/ສທ, ລົງວັນທີ 9/1/2013.
- **ອີງຕາມ:** ຈົດໝາຍຮັບຮອງເອົາການຊ່ວຍເຫຼືອຂອງພະແນກສາທາລະນະສຸກແຂວງຜົ້ງສາລີ ສະບັບເລກທີ 40/ພສຂ, ລົງວັນທີ 15/10/2013.
- **ອີງຕາມ:** ແຜນຊ່ວຍເຫຼືອລ້າຂອງມູນນິທິຟື້ນຟູສຸຂະພາບລາວ ໃນການບໍລິການກວດ ແລະ ປິ່ນປົວພະຍາດ ແຂ້ວ, ຫູ-ດັງ-ຄໍ, ກວດແມ່ມານ ແລະ ເດັກນ້ອຍ, ພ້ອມກັບຊ່ວຍເຫຼືອເຄື່ອງມືອຸປະກອນການແພດ ທີ່ຈຳເປັນໃຫ້ແກ່ 3 ເມືອງ (ເມືອງໃໝ່, ເມືອງສຳພັນ ແລະ ເມືອງບຸນໃຕ້).

ທາງກົມປິ່ນປົວ ຈຶ່ງແຈ້ງມາຍັງພະແນກສາທາລະນະສຸກແຂວງຜົ້ງສາລີ ຊ່ວຍແຈ້ງການເຖິງ 3 ເມືອງເປົ້າໝາຍ (ເມືອງໃໝ່, ເມືອງສຳພັນ ແລະ ເມືອງບຸນໃຕ້) ໃຫ້ກະກຽມ ແລະ ແຈ້ງການຕໍ່ເຖິງພໍ່ແມ່ປະຊາຊົນ ຢູ່ບັນດາບ້ານທີ່ຂຶ້ນກັບເມືອງຮັບຜິດຊອບ ໃຫ້ເຂົ້າມາຮັບບໍລິການກວດ ແລະ ປິ່ນປົວ ພະຍາດຫູ-ດັງ-ຄໍ, ແຂ້ວ, ຕາ, ກວດແມ່ມານ ແລະ ເດັກນ້ອຍ, ຢູ່ໂຮງໝໍເມືອງ ທີ່ຂຶ້ນກັບ, ຕາມວັນເວລາດັ່ງນີ້:

1. ເມືອງໃໝ່: ວັນທີ 4-6 /02/2014 (ສະຖານທີ່ ແມ່ນໂຮງໝໍເມືອງໃໝ່)
2. ເມືອງສຳພັນ: ວັນທີ 7-8/02/2014 (ສະຖານທີ່ ແມ່ນໂຮງໝໍເມືອງສຳພັນ)
3. ເມືອງບຸນໃຕ້: ວັນທີ 9-10/02/2014 (ສະຖານທີ່ ແມ່ນໂຮງໝໍເມືອງບຸນໃຕ້)

ພ້ອມກັບຈັດທີມງານຈາກໂຮງໝໍແຂວງ ຈຳນວນ 02 ທ່ານ ເຂົ້າຮ່ວມກັບທີມງານຂອງມູນນິທິຟື້ນຟູສຸຂະພາບລາວ ເພື່ອເປັນການຖອດຖອນບົດຮຽນ ໃນການກວດ ແລະ ປິ່ນປົວພະຍາດ ແລະ ການນຳໃຊ້ເຄື່ອງມືອຸປະກອນການແພດ ທີ່ທັນສະໄໝ, ທີມງານ 2 ທ່ານ ມີດັ່ງນີ້:

1. ແພດຊ່ຽວຊານຕາ 01 ທ່ານ
2. ແພດ Echography 01 ທ່ານ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານຊ່ວຍພິຈາລະນາ ແລະ ກະກຽມຈັດຕັ້ງປະຕິບັດກິດຈະກຳ ຢູ່ 3 ເມືອງເປົ້າໝາຍ ໃນຄັ້ງນີ້ດ້ວຍ.

**ຫົວໜ້າກົມປິ່ນປົວ**

ກົມປິ່ນປົວ

ຮສ.ດຣ ຈັນທິມມາ ວົງສາພັນ

LAO REHABILITATION FOUNDATION, Inc.
ມູນລະນິທິຟື້ນຟູສຸຂະພາບລາວ

USA: 86 El Nido Dr, CA 94559, USA * Tel: +1 707 486 0660 * Fax: +1 707 255 6787 * www.lao-foundation.org

September 02, 2013

Ass.Prof. Dr. Chanphomma Vongsamphanh
Director of Curative Department
Ministry of Health, Lao PDR.
Tel/Fax: + 856 -21-214011

CC: Dr. Indara Phetsamone

Dear Ass.Prof. Dr. Chanphomma Vongsamphanh,

Thank you for your good cooperation in our proposed joint mission between Lao Rehabilitation Foundation and Department of Phongsaly Provincial Public Health at Phongsaly District Hospitals in February 2014.

Headquartered in California, USA, Lao Rehabilitation Foundation, Inc. is a non-profit, non-religious, non-political organization. Activities of the foundation in Laos are conducted by its President Dr. Luc Janssens. The purpose of LRF is to provide medical services to Laotian citizens, with a greater focus on children. The Foundation has conducted several missions in remote area of the Northern provinces in the past, providing medical services to the poor. The Foundation has also provided mobile medical equipment for dental, E.N.T and eye care in 4 Northern provinces that included Phongsaly province in 2011, and conducted many cleft lip, cleft palate plastic surgery and goiter / nodule surgery missions in Laos.

The approval process for this mission is being coordinated by Dr. Phetsamone Indara and the department of Phongsaly Provincial Public Health.

The Lao Rehabilitation Foundation is pleased to inform you of our agreement to provide the necessary funds for this mission, including transportation, accommodation, mobile medical equipment, medicine and other necessities for the mission in Phongsaly province in the first and second weeks of February, 2014. We plan to conduct the mission at three locations, Mai, Samphan and Bounneua District Hospitals of Phongsaly Province. We further plan to provide support for some medical equipment for three district hospitals.

Our goal is to provide care for dental, internal medicine diseases, expectant mother and pediatric service for all patients free of charge, with no regard to gender, age, ethnic background or religion while developing the skills of Lao medical personnel with the assistance of US doctors in the fields of dental care, pediatric care, expectant mother examination.

In addition to me and my Lao staff, our team will include the following US doctors: expert internal medicine, pediatric specialist and ultrasound specialist.

Should you need any additional information or have any inquiries please contact me at email: janssens@sonic.net or contact Dr. Phetsamone Indara by phone 22203708 or email: inda_oph@yahoo.com

We are looking forward to receiving soon the official approval for this mission.

Yours sincerely,

LAO REHABILITATION FOUNDATION, INC. · CALIFORNIA · USA · LRF

Dr. Luc Janssens, President LRF

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ພະແນກສາທາລະນະສຸກແຂວງຜົ້ງສາລີ

ໂຮງໝໍແຂວງ

ເລກທີ່...0179...../ຮໝຂ.

ຜົ້ງສາລີ, ວັນທີ...25/8/2013...

# <u>ໃບສະເໜີ</u>

**ຮຽນ:** ທ່ານປະທານມູນນິທິ ຟື້ນຟູສຸຂະພາບລາວ (Lao Rehabilitation Foundation).

**ເລື່ອງ:** ຂໍຊ່ວຍເຫຼືອເຄື່ອງມືອຸປະກອນການແພດທີ່ຈຳເປັນ ໃຫ້ແກ່ ໂຮງໝໍເມືອງ.

- ອີງຕາມ: ຄວາມຂາດແຄນ, ຄວາມຈຳເປັນ ແລະ ຄວາມຕ້ອງການ ດ້ານເຄື່ອງມືອຸປະກອນການແພດ ຢູ່ລະດັບຂັ້ນເມືອງ.
- ອີງຕາມ: ທຶນງົບປະມານຂອງແຂວງ ບໍ່ພຽງພໍສະໜອງໃຫ້ໄດ້ຕາມຄວາມຕ້ອງການຂອງເມືອງ.
- ອີງຕາມ: ການເຄີຍໃຫ້ການຊ່ວຍເຫຼືອເຄື່ອງມືອຸປະກອນການແພດ ຈາກມູນນິທິ ຟື້ນຟູສຸຂະພາບລາວ ໃຫ້ແກ່ໂຮງໝໍແຂວງຜົ້ງສາລີ ໃນໄລຍະຜ່ານມາ.

3 ເມືອງໃຕ້ຂອງແຂວງຜົ້ງສາລີ ຄື: ເມືອງໃໝ່, ເມືອງສຳພັນ ແລະ ເມືອງບຸນໃຕ້ ຍັງຈັດເປັນເມືອງ ທີ່ທຸກຍາກ ຂອງປະເທດລາວ, ທາງດ້ານສາທາລະນະສຸກ ກໍ່ຄືການບໍລິການຮັກສາສຸຂະພາບ ໃຫ້ແກ່ພໍ່ແມ່ປະຊາຊົນກໍຍັງພົບຂໍ້ຫຍຸ້ງຍາກ ຫຼາຍດ້ານ ໂດຍສະເພາະ ດ້ານບຸກຄະລາກອນ ແລະ ເຄື່ອງມືອຸປະກອນການແພດ, ເຮັດໃຫ້ການບໍລິການກວດ ແລະ ປິ່ນປົວຢູ່ຂັ້ນເມືອງ ແມ່ນປະຕິບັດແບບພື້ນຖານ, ກວດ ແລະ ປິ່ນປົວຕາມອາການ ຊຶ່ງພົບຂໍ້ຫຍຸ້ງຍາກ ໃນການບົ່ງມະຕິພະຍາດ, ການປິ່ນປົວ ແລະ ການສົ່ງຕໍ່ໃນກໍລະນີຈຳເປັນ.

ທາງຄະນະອຳນວຍການໂຮງໝໍແຂວງຜົ້ງສາລີຂໍຖືເປັນກຽດຮຽນສະເໜີມາຍັງທ່ານປະທານມູນນິທິ ຟື້ນຟູສຸຂະພາບລາວ ໃຫ້ການຊ່ວຍເຫຼືອເຄື່ອງມືອຸປະກອນການແພດທີ່ຈຳເປັນ ໃຫ້ແກ່ໂຮງໝໍ 3 ເມືອງຂອງຜົ້ງສາລີ, ເພື່ອຊ່ວຍປັບປຸງ ແລະ ພັດທະນາການໃຫ້ການບໍລິການຄົນເຈັບຢູ່ໃນໂຮງໝໍໃຫ້ດີຂຶ້ນເທື່ອລະກ້າວ ເຮັດໃຫ້ຫຼຸດຜ່ອນອັດຕາການຕາຍ ໂດຍສະເພາະແມ່ມານ ແລະ ເດັກນ້ອຍ ລົງເທື່ອລະກ້າວ, ລາຍການເຄື່ອງມືອຸປະກອນການແພດທີ່ຕ້ອງການມີດັ່ງນີ້:

1. ເຄື່ອງ Ultrasound (Echography).
2. Oxygen Concentrator
3. Fetal Heart Doppler

ດັ່ງນັ້ນ, ຈຶ່ງຮຽນສະເໜີມາຍັງທ່ານ ຊ່ວຍຄົ້ນຄວ້າ ພິຈາລະນາຊ່ວຍເຫຼືອໃຫ້ແກ່ 3 ເມືອງນີ້ດ້ວຍ.

ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖືເປັນຢ່າງສູງ.

ຄະນະອຳນວຍການໂຮງໝໍແຂວງຜົ້ງສາລີ

ກະຊວງສາທາລະນະສຸກ ໂຮງໝໍແຂວງ ພະແນກສາທາລະນະສຸກແຂວງຜົ້ງສາລີ

ດຣ ຄຳເພັດ ຈອມຂຸ້ນມີໄຊ